7 ກໍລະກົດ 2017

# ເຊີນສົ່ງຈົດໝາຍສອບຖາມ, ກອງທຶນຮ່ວມມືລະບົບນິເວດ ທີ່ຫຼໍ່ແຫຼມ ອິນໂດ-ມຽນມາ

**ປະເທດ:** ກໍາປູເຈຍ, ຈີນ, ສປປ ລາວ, ໄທ ແລະ ຫວຽດນາມ
**ມື້ປິດຮັບສະໝັກ:** ວັນສຸກ ວັນທີ 19 ພຶດສະພາ 2017
**ທິດທາງຍຸດທະສາດສໍາລັບທຶນໃນຄັ້ງນີ້:** 4
ບົດສະເໜີໂຄງການສໍາລັບທຶນຂະໜາດໃຫຍ່ (>$20,000). ສົ່ງໄປທີ່ອີເມວ cepfgrants@conservation.org
ບົດສະເໜີໂຄງການສໍາລັບທຶນຂະໜາດນ້ອຍ (≤$20,000). ສົ່ງໄປທີ່ອີເມວ CEPF-Indoburma@iucn.org

ກອງທຶນຮ່ວມມືລະບົບນິເວດທີ່ຫຼໍ່ແຫຼມ (CEPF) ຖືກສ້າງຂຶ້ນເພື່ອອະນຸລັກເຂດທີ່ມີຄວາມອຸດົມສົມບູນທາງຊີວະນາໆພັນ ແລະ ພື້ນທີ່ທີ່ມີໄພຂົ່ມຂູ່ຫຼາຍທີ່ສຸດໃນໂລກ ທີ່ຮູ້ກັນໃນນາມ ເຂດລໍ່ແຫຼມທາງດ້ານຊີວະນາໆພັນ. ກອງທຶນຮ່ວມມືລະບົບນິເວດທີ່ລໍ່ແຫຼມ (CEPF) ເປັນໂຄງການຮ່ວມມືຂອງ ທະນາຄານພັດທະນາຝຣັ່ງ (l'Agence Française de Développement), ອົງການອານຸລັກສາກົນ (Conservation International), ສະຫະພາບເອີຣົບ (European Union), ກອງທຶນສິ່ງແວດລ້ອມໂລກ (Global Environment Facility), ລັດຖະບານຍີ່ປຸ່ນ (Government of Japan), ມູນນິທິ ຈອນ ດີ. ແລະ ແຄັດທີຣີນ ທີ. ແມັກອາເທີ (John D. and Catherine T. MacArthur Foundation), ແລະ ທະນາຄານໂລກ (World Bank) ແລະ ນອກຈາກນັ້ນເຂດລໍ່ແຫຼມ ອິນໂດ-ມຽນມາ ຍັງໄດ້ຮັບການສະໜັບສະໜູນຈາກ ມູນນິທິ ມາກາເຣັດ ເອ. ຄາກິວ (Margaret A. Cargill Foundation) ອີກດ້ວຍ. ຈຸດປະສົງຫຼັກກໍ່ເພື່ອຮັບປະກັນໃຫ້ສັງຄົມມີຄວາມເປັນເຈົ້າການໃນການອະນຸລັກຮັກສາຊີວະນາໆພັນ.

ເຂດລໍ່ແຫຼມ ອິນໂດ-ມຽນມາ ແມ່ນໄດ້ກວມເອົາເຂດແດນ ທີ່ບໍ່ແມ່ນເຂດແດນທາງທະເລທັງໝົດຂອງປະເທດ ກໍາປູເຈຍ, ສປປ ລາວ, ມຽນມາ, ໄທ ແລະ ຫວຽດນາມ ລວມທັງໄດ້ກວມເອົາເຂດແດນທາງທິດໃຕ້ຂອງປະເທດຈີນ.

ອົງການສາກົນ ເພື່ອການອະນຸລັກທໍາມະຊາດ (International Union for Conservation of Nature) ແລະ ຟາມກະໂດຣີ ແລະ ສວນພຶດສາດ (Kadoorie Farm and Botanic Garden (KFBG) ແລະ ກອງທຶນຮ່ວມມືລະບົບນິເວດທີ່ຫຼໍ່ແຫຼມ (CEPF) ຮູ້ສຶກເປັນກຽດ ແລະ ມີຄວາມຍິນດີຮັບຈົດໝາຍສອບຖາມ (Letter of Inquiry, LoIs) ຈາກບັນດາອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ກຸ່ມຊຸມຊົນ, ບໍລິສັດເອກະຊົນ ແລະ ບັນດາອົງການຈັດຕັ້ງສັງຄົມ ເພື່ອຂໍທຶນຊ່ວຍເຫຼືອລ້າສໍາລັບປະເທດກໍາປູເຈຍ, ຈີນ, ສປປ ລາວ, ໄທ ແລະ ຫວຽດນາມ ທຶນຂະໜາດໃຫຍ່ໃນມຽນມາ ແມ່ນໄດ້ຖືກປະກາດພ້ອມດຽວກັນກັບປະກາດນີ້.

ສໍາລັບຜູ້ສະໝັກນັ້ນຈະຕ້ອງຮູ້ຈັກ ແລະ ຄຸ້ນເຄີຍກັບຍຸດທະສາດການລົງທຶນຂອງ ກອງທຶນຮ່ວມມືລະບົບນິເວດທີ່ລໍ່ແຫຼມ (CEPF) (ເຊິ່ງໄດ້ສັງລວມໄວ້ເປັນພາສາຈີນ, ຂະແມ, ລາວ, ໄທ ແລະ ຫວຽດນາມ ທີ່ນີ້ ແລະ ມີສະບັບສົມບູນທີ່ເປັນພາສາອັງກິດ ທີ່ນີ້ (PDF 8.6MB)) ແລະ ສາມາດຕິດຕໍ່ພົວພັນກັບ ທີມງານຈັດຕັ້ງປະຕິບັດຢູ່ໃນພາກພື້ນ (RIT) ອິນໂດ-ມຽນມາ ທີ່ CEPF-Indoburma@iucn.org ໃນກໍລະນີທີ່ທ່ານມີຄໍາຖາມ ຫຼື ມີຈຸດປະສົງທີ່ຈະປຶກສາກ່ຽວກັບແນວຄວາມຄິດຂອງໂຄງການ.

ຈົ່ງຄໍານຶງວ່າ ທຶນດັ່ງກ່າວແມ່ນຈະໄດ້ມອບໃຫ້ໂຄງການທີ່ມີຄວາມສອດຄ່ອງກັບຍຸດທະສາດການລົງທຶນທີ່ສຸດ. ສະນັ້ນ ອົງການສາກົນເພື່ອການອະນຸລັກທໍາມະຊາດ (IUCN) ແລະ ຟາມກະໂດຣີ ແລະ ສວນພືດສາດ (KFBG) ແລະ ກອງທຶນຮ່ວມມືລະບົບນິເວດທີ່ລໍ່ແຫຼມ (CEPF) ຈຶ່ງມີຄວາມຍິນດີເຊີນບັນດາຜູ້ສະໝັກທີ່ໄດ້ຮັບທຶນໃນຮອບທີ່ຜ່ານມາ ແລະ ບັນດາອົງການຈັດຕັ້ງທີ່ບໍ່ໄດ້ຮັບທຶນຈາກ ກອງທຶນຮ່ວມມືລະບົບນິເວດທີ່ລໍ່ແຫຼມ (CEPF) ຈາກການສະໝັກໃນຄັ້ງກ່ອນ.

ຈົດໝາຍເຊີນນີ້ແມ່ນໄດ້ເປີດໂອກາດໃຫ້ກັບບັນດາອົງການຈັດຕັ້ງສັງຄົມທັງທ້ອງຖິ່ນ ແລະ ສາກົນ, ຈົ່ງຄໍານຶງວ່າ ການພິຈາລະນາແມ່ນຈະຂຶ້ນກັບໂຄງການທີ່ສາມາດສະແດງບົດບາດອັນໜັກແໜ້ນຕໍ່ອົງການຈັດຕັ້ງໃນທ້ອງຖິ່ນ ແລະ/ຫຼື ສຸມໃສ່ການສ້າງຄວາມອາດສາມາດໃຫ້ກັບສັງຄົມໃນທ້ອງຖິ່ນໄດ້ຢ່າງຊັດເຈນ

## ທິດທາງຍຸດທະສາດໃນການສະໜອງທຶນພາຍໃຕ້ຈົດໝາຍເຊີນໃນຄັ້ງນີ້ແມ່ນ:

**ທິດທາງຍຸດທະສາດ 4: ສ້າງຄວາມເຂັ້ມແຂງໃຫ້ກັບຊຸມຊົນເພື່ອເປັນເຈົ້າການໃນການອະນຸລັກ ແລະ ຄຸ້ມຄອງເຂດພື້ນທີ່ຊີວະນາໆພັນບູລິມະສິດ**

*ໝາຍເຫດ: ໂຄງການຕ້ອງສຸມໃສ່ເຂດບູລິມະສິດທີ່ໄດ້ກໍານົດໄວ້ໃນຕາຕະລາງ 24 ໜ້າ 198 ຂອງລັກສະນະກ່ຽວກັບລະບົບນິເວດ (Ecosystem Profile). ໂຄງການຕ້ອງສ້າງຂຶ້ນບົນພື້ນຖານການຕັ້ງຄໍາຖາມກ່ຽວກັບວຽກທີ່ໄດ້ຮັບການສະໜັບສະໜູນໂດຍ CEPF ໃນເຂດບູລິມະສິດ. ບູລິມະສິດຈະໄດ້ຮັບການພິຈາລະນາສໍາລັບໂຄງການທີ່ສະແດງໃຫ້ເຫັນຜົນປະໂຫຍດທີ່ມີໂຕຕົນຕໍ່ປະຊາຊົນໃນພື້ນທີ່.*

ອົງການສາກົນເພື່ອການອະນຸລັກທໍາມະຊາດ (IUCN) ແລະ ຟາມກະໂດຣີ ແລະ ສວນພືດສາດ (KFBG) ແລະ ກອງທຶນຮ່ວມມືລະບົບນິເວດທີ່ລໍ່ແຫຼມ (CEPF) ຈຶ່ງຂໍຮຽນເຊີນທ່ານຍື່ນບົດສະເໜີໂຄງການ ທີ່ສຸມໃສ່ການແກ້ໄຂໜຶ່ງ ຫຼືຫຼາຍກວ່າໜຶ່ງບັນຫາບູລິມະສິດລຸ່ມນີ້:

4.2 ໂຄງການທົດລອງ ແລະ ຂະຫຍາຍປ່າຊຸມຊົນ, ການປະມົງຊຸມຊົນ ແລະ ປ່າສະຫງວນທີ່ຄຸ້ມຄອງໂດຍຊຸມຊົນ.
4.3 ພັດທະນາລະບົບກົນໄກການຄຸ້ມຄອງແບບມີສ່ວນຮ່ວມສໍາລັບປ່າສະຫງວນທີ່ໄດ້ຮັບການສ້າງຕັ້ງຢ່າງເປັນທາງການ ທີ່ຈະຊຸກຍູ້ການມີສ່ວນຮ່ວມຂອງຊຸມຊົນໃນການຄຸ້ມຄອງ ແລະ ຈັດການ.

**ຂໍ້ມູນເພີ່ມເຕີມ**

ບຸກຄົນ (ຜູ້ສະໝັກ) ຈະຕ້ອງເຮັດວຽກກັບອົງການຈັດຕັ້ງທາງສັງຄົມໃດໜຶ່ງ ເພື່ອເຮັດແບບຟອມສະໝັກ ແທນການສະໝັກໂດຍກົງ ຖ້າຫາກບໍ່ແນ່ໃຈກ່ຽວກັບເງື່ອນໄຂຂອງຕົນໃນການສະໝັກ ສາມາດຕິດຕໍ່ພົວພັນກັບ ທີມງານຈັດຕັ້ງປະຕິບັດຢູ່ໃນພາກພື້ນ (RIT) ອິນໂດ-ມຽນມາ ທີ່ CEPF-Indoburma@iucn.org. ມີຄູ່ມືແນະນຳສຳລັບຜູ້ສະໝັກທຸກທ່ານ ແລະ ສຳລັບອົງການຈັດຕັ້ງທາງສັງຄົມທີ່ສົນໃຈສະໝັກ ໃຫ້ຕິດຕໍ່ພົວພັນກັບ ທີມງານຈັດຕັ້ງປະຕິບັດຢູ່ໃນພາກພື້ນ (RIT) ອິນໂດ-ມຽນມາ CEPF-Indoburma@iucn.org. ກ່ອນ ເພື່ອກະກຽມຈົດໝາຍສອບຖາມຂອງຕົນ.

ທຶນຊ່ວຍເຫຼືອດັ່ງກ່າວບໍ່ສາມາດນຳໄປໃຊ້ຈ່າຍໃນຮູບແບບຕ່າງໆໄດ້ ເຊັ່ນ: (i) ຊື້ດິນ (ii) ໂຍກຍ້າຍ ຫຼື ປັບປຸ່ງຊັບສິນທາງດ້ານວັດທະນະທຳທາງກາຍະພາບ (ໃນນັ້ນແມ່ນລວມທັງສະຖານທີ່ບູຮານຄະດີ, ສະຖານທີ່ກ່ຽວກັບຊາກດຶກດຳບັນ, ສະຖານທີ່ທາງປະຫວັດສາດ, ສາດສະໜາ ຫຼື ຄຸນຄ່າທາງທຳມະຊາດອັນເປັນເອກະລັກ) (iii) ການຍົກຍ້າຍຖິ່ນຖານໃໝ່ຂອງປະຊາຊົນ ຫຼື ການຍົກຍ້າຍຈັດສັນທີ່ບໍ່ສະໝັກໃຈ (iv) ໃຊ້ເປັນກອງທຶນ ເປັນຕົ້ນ. ທຸກວຽກງານກິດຈະກຳຈະຕ້ອງປະຕິບັດຕາມນະໂຍບາຍຄວາມປອດໄພຕໍ່ສັງຄົມ ແລະ ສິ່ງແວດລ້ອມ ຂອງ ກອງທຶນຮ່ວມມືລະບົບນິເວດທີ່ລໍ່ແຫຼມ (CEPF) ເຊິ່ງສາມາດອ່ານໄດ້ ທີ່ນີ້.

**ຜູ້ສະໝັກທຶນຂະໜາດນ້ອຍ (ສູງເຖິງ US$20,000)** ສາມາດສະໝັກເປັນພາສາອັງກິດ. ຈີນ, ຂະແມ, ລາວ, ໄທ ຫຼື ຫວຽດນາມ), ໂດຍໃຊ້ແບບຟອມນີ້, ສຳລັບຈົດໝາຍສອບຖາມສະບັບສົມບູນ ໃຫ້ສົ່ງ (ເປັນເອກະສານຄັດຕິດ) ໄປທີ່ CEPF-Indoburma@iucn.org . ການຢືນຢັນການໄດ້ຮັບເອກະສານແມ່ນຈະແຈ້ງທາງອີເມລ. ຫຼັງຈາກນັ້ນຜູ້ສະໝັກຈະໄດ້ຮັບການຕິດຕໍ່ກັບກ່ຽວກັບຂັ້ນຕອນຕໍ່ໄປ. ສຳລັບຄຳຖາມ ແລະ ຂໍ້ຂ້ອງໃຈໃນຊ່ວງຂັ້ນຕອນດັ່ງກ່າວ ສາມາດສົ່ງສອບຖາມໄດ້ທີ່ CEPF-Indoburma@iucn.org

**ຜູ້ສະໝັກທຶນຂະໜາດໃຫຍ່ (ຫຼາຍກວ່າ US$20,000)** ສາມາດສະໝັກເປັນພາສາອັງກິດຢ່າງດຽວເທົ່ານັ້ນ ໂດຍໃຊ້ແບບຟອມນີ້, ສຳລັບຈົດໝາຍສອບຖາມສະບັບສົມບູນ ໃຫ້ສົ່ງ (ເປັນເອກະສານຄັດຕິດ) ໄປທີ່ cepfgrants@conservation.org. ການຢືນຢັນການໄດ້ຮັບເອກະສານແມ່ນຈະແຈ້ງທາງອີເມລ. ຫຼັງຈາກນັ້ນຜູ້ສະໝັກຈະໄດ້ຮັບການຕິດຕໍ່ກັບກ່ຽວກັບຂັ້ນຕອນຕໍ່ໄປ. ສຳລັບຄຳຖາມ ແລະ ຂໍ້ຂ້ອງໃຈໃນຊ່ວງຂັ້ນຕອນດັ່ງກ່າວ ສາມາດສົ່ງສອບຖາມໄດ້ທີ່ cepfgrants@conservation.org

ມື້ສຸດທ້າຍໃນການຮັບຈົດໝາຍສອບຖາມ: ວັນສຸກ ວັນທີ 19 ພຶດສະພາ 2017

ຈົດໝາຍສອບຖາມທີ່ເປັນສຳເນົາເອກະສານ (Hardcopy) ແມ່ນຈະບໍ່ຮັບ

ຄຳຕອບສຳລັບຄຳຖາມທີ່ມັກຖືກຖາມເປັນປະຈຳ (ພາສາອັງກິດ) ສາມາດອ່ານໄດ້ ທີ່ນີ້

**ສຳລັບຂໍ້ມູນເພີ່ມເຕີມ ແລະ ຄວາມຊ່ວຍເຫຼືອ ສາມາດຕິດຕໍ່ໄດ້ທີ່:**
ທີມງານຈັດຕັ້ງປະຕິບັດໃນພາກພື້ນ ກອງທຶນຮ່ວມມືລະບົບນິເວດທີ່ລໍ່ແຫຼມ (CEPF), IUCN ສຳນັກງານພາກພື້ນອາຊີ
ສຸຂຸມວິດ 63 ຊອຍ 39, ວັດທະນະ, ບາງກອກ 10110, ປະເທດໄທ
ອີເມລ: CEPF-Indoburma@iucn.org
ໂທ: +66 2 662 4029; ໂທລະສານ: +66 2 662 4389

ແລະ

Kadoorie Conservation China, Kadoorie Farm & Botanic Garden

Lam Kam Road, Tai Po, New Territories, Hong Kong.

ອີເມວ: cepf@kfbg.org

ໂທ: +852 24837178; Fax: +852 24837198